**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 27 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ອົງການໄອຍະການປະຊາຊົນສູງສຸດ

- ອີງຕາມ ລັດຖະທຳມະນູນ ສະບັບປີ 2015, ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ມາດຕາ 59 ຂໍ້ 03;
- ອີງຕາມ ບົດລາຍງານ ຂອງ ອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 024/ອອປສ ລົງວັນທີ 02 ພະຈິກ 2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ ຂອງ ບັນດາສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX, ວັນທີ 08 ພະຈິກ 2021.

## ກອງປະຊຸມ ຕົກລົງ

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 9 ເດືອນ ປະຈຳປີ 2021 ແລະ ວຽກງານ 03 ເດືອນທ້າຍປີ 2021 ຂອງ ອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມ ສະແດງຄວາມຊົມເຊີຍ ອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແລະ ກົດໝາຍ, ໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຢ່າງຮ້າຍແຮງຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ແຕ່ດ້ວຍຄວາມຮັບຜິດຊອບການເມືອງສູງ ຂອງ ອົງການໄອຍະການປະຊາຊົນສູງສຸດ ໃນ 9 ເດືອນຜ່ານມາ ສາມາດຈັດຕັ້ງປະຕິບັດແຜນວຽກ ປະຈຳປີ 2021 ສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ສຳເລັດການແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນສູງສຸດ, ບຳລຸງສ້າງພະນັກງານທາງດ້ານທິດສະດີ, ວິຊາສະເພາະ, ຈັນຍາບັນ-ຈັນຍາທຳ, ຍູ້ແຮງຂະບວນການວຽກດີຄົນເດັ່ນ ຕາມຄຳຂວັນ 3 ມີ 4 ຮັບປະກັນ, ການຕິດຕາມກວດກາ ການປະຕິບັດກົດໝາຍຂອງ ອົງການສືບສວນ-ສອບສວນ ໃນການດຳເນີນ

ຄະດີ, ການປະຕິບັດກົດໝາຍ ຢູ່ ສະຖານທີ່ກັກຄົວ, ກັກຂັງ, ສູນດັດສ້າງ-ຄ້າຍຄຸມຂັງ, ການຕິດຕາມກວດກາ ການດຳເນີນຄະດີຢູ່ສານ ແລະ ການປະຕິບັດຄຳຕັດສິນຂອງສານ ໄດ້ລັບການຈັດຕັ້ງປະຕິບັດ ເຂັ້ມງວດ, ຖືກຕ້ອງ ຕາມກົດໝາຍ ກຳນົດໄວ້ຫຼາຍຂຶ້ນ; ການພິຈາລະນາແກ້ໄຂຄະດີ ຂອງ ອົງການໄອຍະການປະຊາຊົນ ແຕ່ລະຂັ້ນດີຂຶ້ນ ສາມາດຖະແຫຼງ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຂັ້ນຕົ້ນ ຊຶ່ງສານໄດ້ພິຈາລະນາຕັດສິນເອົາຕາມ ກວມ 99, 64% ລື່ນຄາດໝາຍວາງໄວ້ 95% ອັນໄດ້ປະກອບສ່ວນສຳຄັນ ເຂົ້າໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ຄຽງຄູ່ກັບດ້ານດີ, ກອງປະຊຸມເຫັນວ່າ ມີບາງດ້ານທີ່ ອົງການໄອຍະການປະຊາຊົນ ຕ້ອງໄດ້ເອົາໃຈໃສ່ສືບຕໍ່ແກ້ໄຂ ເປັນຕົ້ນ ການຕິດຕາມກວດກາທົ່ວໄປ ຕາມມາດຕາ 39 ແລະ 40 ຂອງກົດໝາຍວ່າດ້ວຍ ອົງການໄອຍະປະຊາຊົນ ສະບັບປີ 2017 ຍັງເຮັດໄດ້ໜ້ອຍ; ການຕິດຕາມກວດກາ ການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ແລະ ການຕິດຕາມກວດກາສະຖານທີ່ ກັກຕົວ, ກັກຂັງ ແລະ ສູນດັດສ້າງ-ຄ້າຍດັດສ້າງ ຈຳນວນໜຶ່ງ ຍັງບໍ່ທັນເຂັ້ມງວດ, ເມື່ອມີການລະເມີດກົດໝາຍ ບໍ່ທັນໄດ້ມີມາດຕະການສະເໜີພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ທັນການ; ການຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ບໍ່ທັນລົງເລິກກວດກາຄວາມຖືກຕ້ອງ ຕາມຄຳຕັດສິນຂອງສານ, ກົດໝາຍ ແລະ ລະບຽບການ ເປັນຕົ້ນ: ການປະມູນຊັບ, ການຊຳລະທາງແພ່ງ, ການມອບຄ່າທຳນຽມສານ, ຄ່າອາກອນເຂົ້າງົບປະມານ, ການຮິບຊັບ ແລະ ວັດຖຸສິ່ງຂອງ ທີ່ສານຕັດສິນຮິບເປັນຂອງລັດ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 07/ນຍ, ລົງວັນທີ 05 ເມສາ 2017 ຍັງເຮັດໄດ້ໜ້ອຍ.

ສຳລັບວຽກງານ 03 ເດືອນທ້າຍປີ 2021, ກອງປະຊຸມ ສະເໜີໃຫ້ ອົງການໄອຍະການປະຊາຊົນສູງສຸດ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດ ບັນດາຄາດໝາຍ ແລະ ວຽກງານຈຸດສຸມ ໃຫ້ສຳເລັດ ຕາມແຜນການປີ 2021 ທີ່ກຳນົດໄວ້ໃນມະຕິກອງປະຊຸມ ສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 15/ສພຊ, ລົງວັນທີ 05 ພະຈິກ 2020.

**ມາດຕາ 2 ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມ ເຫັນດີຮັບຮອງເອົາບັນດາເນື້ອໃນ ທີ່ໄດ້ກຳນົດໄວ້ໃນຄາດໝາຍສູ້ຊົນ ແລະ ທິດທາງແຜນການຈຸດສຸມ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນສູງສຸດ, ແຕ່ກອງປະຊຸມສະເໜີໃຫ້ ອົງການໄອຍະການປະຊາຊົນສູງສຸດ ສຸມໃສ່ຈັດຕັ້ງປະຕິບັດບາງດ້ານ ດັ່ງນີ້:

1. ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາທົ່ວໄປ ຕາມມາດຕາ 39 ແລະ 40 ຂອງກົດໝາຍວ່າດ້ວຍ ອົງການໄອຍະປະຊາຊົນ ສະບັບປີ 2017 ໃຫ້ເຂັ້ມງວດຫຼາຍຂຶ້ນ;

2. ຍົກສູງຄຸນນະພາບໃນການຕິດຕາມກວດກາ ການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ເປັນຕົ້ນ: ການປະຕິບັດ 7 ມາດຕະການສະກັດກັ້ນ ຕາມມາດຕາ 136 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປີ 2017; ແກ້ໄຂປະກົດການລະເມີດກົດໝາຍ ໂດຍເຈດຕະນາ ໃນການດຳເນີນຄະດີ ຂອງອົງການສືບສວນ-ສອບສວນ ໂດຍສະເພາະ ການກັກຕົວ, ຈັບຕົວ, ກັກຂັງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ປະຕິບັດສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ຮັບປະກັນຄຸນນະພາບ, ປະສິດທິຜົນ ແລະ ບັນລຸ 95% ຂຶ້ນໄປຂອງການແກ້ໄຂຄະດີ ແລະ ໃຫ້ບັນລຸ 95 % ທີ່ສານຕັດສິນເອົາຕາມຄຳຖະແຫຼງ ຂອງ ອົງການໄອຍະການປະຊາຊົນ;

4. ເອົາໃຈໃສ່ຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມຖືກຕ້ອງ, ຕາມກົດໝາຍ, ລະບຽບການ ແລະ ທັນກຳນົດເວລາ, ຮັບປະກັນ ໃຫ້ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ຕາມມາດຕາ 98 ຂອງລັດຖະທຳມະນູນ;

5. ປັບປຸງ ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ; ອອກນິຕິກຳໃຕ້ກົດໝາຍໃຫ້ໄດ້ 10 ສະບັບຂຶ້ນໄປ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

6. ປັບປຸງກົງຈັກການຈັດຕັ້ງ, ບັນຈຸສັບຊ້ອນ ພະນັກງານໄອຍະການ ເຂົ້າໃສ່ກົງຈັກການຈັດຕັ້ງຂອງ ອົງການໄອຍະການແຕ່ລະຂັ້ນ ໃຫ້ສາມາດຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນ ແຕ່ລະໄລຍະ; ບຳລຸງສ້າງ, ຍົກລະດັບ ທິດສະດີການເມືອງ, ຈັນຍາບັນ-ຈັນຍາທຳ, ຄວາມຮູ້, ຄວາມສາມາດ ທາງດ້ານວິຊາສະເພາະ ຂອງພະນັກງານໄອຍະການ; ປັບປຸງວິທີເຮັດ ແລະ ແບບແຜນວິທີເຮັດວຽກ ໃຫ້ໜັກແໜ້ນ ເຂັ້ມແຂງ, ເອົາໃຈໃສ່ສ້າງພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ໂດຍສະເພາະ ຫ້ອງການ ອົງການໄອຍະການ ປະຊາຊົນເຂດ 3 ນະຄອນຫຼວງວຽງຈັນ ແລະ ອົງການໄອຍະການປະຊາຊົນປະຈຳນະຄອນຫຼວງວຽງຈັນ.

**ມາດຕາ 3 ຮັບຮອງເອົາ ບັນດາມາດຕະການຈັດຕັ້ງປະຕິບັດ ຂອງ ອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 05 ມາດຕະການຈັດຕັ້ງປະຕິບັດ ທີ່ ອົງການໄອຍະການ ປະຊາຊົນສູງສຸດ ໄດ້ກຳນົດໄວ້ໃນບົດລາຍງານ, ແຕ່ກອງປະຊຸມສະເໜີໃຫ້ ອົງການໄອຍະການປະຊາຊົນສູງສຸດ ແລະ ລັດຖະບານ ເອົາໃຈໃສ່ບາງມາດຕະການ ດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ

1.1 ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກົມການເມືອງສູນກາງພັກ ວ່າດ້ວຍ ການຍົກສູງ ຄຸນນະພາບການດຳເນີນຄະດີ ຕາມຂະບວນການຍຸຕິທຳ ສະບັບເລກທີ 112/ກມສພ ລົງວັນທີ 02 ມິຖຸນາ 2020, ມະຕິກອງປະຊຸມໃຫຍ່ອົງຄະນະພັກ ຂອງອົງການໄອຍະການປະຊາຊົນ ສູງສຸດ ຄັ້ງທີ V ແລະ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ເປັນວຽກງານອັນລະອຽດ ຂອງອົງການໄອຍະການປະຊາຊົນ ໃນແຕ່ລະຂັ້ນ, ນຳພາ-ຊີ້ນຳ ຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ;

1.2 ປະເມີນຜົນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ຕາມມາດຕາ 10 ຂອງກົດໝາຍວ່າ ອົງການໄອຍະການປະຊາຊົນ ສະບັບປີ 2017; ຕິດຕາມກວດກາ ການປະພຶດ, ການປະຕິບັດສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການແຕ່ລະຂັ້ນ ໃຫ້ເປັນປົກກະຕິຕໍ່ເນື່ອງ ເພື່ອຍົກສູງຄຸນນະພາບໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນສູງສຸດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

1.3 ເອົາໃຈໃສ່ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ເຂັ້ມງວດ ແລະ ທັນເວລາ ເປັນຕົ້ນ ການຈັດຕັ້ງປະຕິບັດມາດຕາ 390 ຂອງປະມວນກົດໝາຍອາຍາ ສະບັບປີ 2017 ເພື່ອສະກັດກັ້ນ ແລະ ຕ້ານການລະເມີດກົດໝາຍ ໃນການດຳເນີນຄະດີຕາມຂະບວນການຍຸຕິທຳ;

1.4 ເພີ່ມທະວີການປະຕິບັດກົນໄກການປະສານສົມທົບ ລະຫວ່າງ ອົງການໄອຍະການປະຊາຊົນສູງສຸດ ກັບ ສານປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ໃນການດຳເນີນຄະດີ ຕາມຂະບວນການຍຸຕິທຳ ໃຫ້ມີຄວາມກົມກຽວ, ຖືກຕ້ອງ ຕາມສິດ ແລະ ໜ້າທີ່ຂອງຕົນ ທີ່ກຳນົດໄວ້ໃນກົດໝາຍ;

1.5 ເອົາໃຈໃສ່ເກັບກຳ ແລະ ຫັນການເຄື່ອນໄຫວຂອງອົງການໄອຍະການປະຊາຊົນ ໄປສູ່ທັນສະໄໝ ເທື່ອລະກ້າວ ດ້ວຍການນຳໃຊ້ ວິທະຍາສາດ-ເຕັກໂນໂລຊີ ໃຫ້ສອດຄ່ອງກັບຄວາມສາມາດ ຕົວຈິງ ຂອງອົງການໄອຍະການປະຊາຊົນ ໃນແຕ່ລະໄລຍະ.

**2.** ໃຫ້ລັດຖະບານ ຊີ້ນຳ ກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ອົງການ ໄອຍະການປະຊາຊົນ ເປັນຕົ້ນ: ການສະໜອງດ້ານງົບປະມານ, ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນ ເຕັກນິກ ອັນຈຳເປັນໃຫ້ ອົງການໄອຍະການປະຊາຊົນ ໄດ້ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍ.

**ມາດຕາ 4** ການຈັດຕັ້ງປະຕິບັດ

ມອບໃຫ້ ອົງການໄອຍະການປະຊາຊົນສູງສຸດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

ມອບໃຫ້ ລັດຖະບານ ຊີ້ນຳກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງ ເຂັ້ມງວດ;

ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ຂອງ ສະພາແຫ່ງຊາດ, ຄະນະສະມາຊິກ ສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາ ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ. ໃນນັ້ນ ກຳມາທິການ ຍຸຕິທຳ ເປັນໃຈກາງ ແລະ ເປັນເຈົ້າການປະສານງານ ໃນການຕິດຕາມ, ຊຸກຍູ້ ແລະ ກວດກາປະເມີນຜົນ ການປະຕິບັດມະຕິສະບັບນີ້.

**ມາດຕາ 5** ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**